

# ອົງການຈັດຕັ້ງມະຫາຊົນຮາກຖານ ທຫລ
# ຈັດສຳມະນາທາງດ້ານວິຊາການ (ແບບອອນລາຍ)




(ສະຫາຍ ບຸນທະວີ ສຸດາວົງ ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ)




(ສະຫາຍ ຈິນດາໄມ ວິໄລທົງສ໌ ເລຂາຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ)

ໃນຕອນບ່າຍຂອງວັນທີ 23 ພະຈິກ 2021 ທີ່ທະນາຄານແຫ່ງ ສປປ ລາວ, ນະຄອນຫຼວງວຽງຈັນ ໄດ້ຈັດສຳມະນາທາງດ້ານວິຊາການ ແບບອອນລາຍ ພາຍໃຕ້ການເປັນປະທານຂອງ ສະຫາຍ ບຸນທະວີ ສຸດດາວົງ ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ແລະ ການເຂົ້າຮ່ວມຂອງບັນດາຄະນະນຳ ແລະ ສະມາຊິກຊາວໜຸ່ມຮາກຖານອ້ອມຂ້າງ ທຫລ, ສາຂາ ທຫລ ປະຈຳພາກ ແລະ ຜູ້ບໍລິຫານ ແລະ ພະນັກງານທະນາຄານນາຄານທຸລະກິດ ເຂົ້າຮ່ວມທາງໄກ ຫຼາຍກວ່າ 160 ສະຫາຍ.




ສະຫາຍເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ໃຫ້ຮູ້ວ່າ: ການເຄື່ອນໄຫວຂະບວນການວຽກງານວິຊາສະເພາະຄັ້ງນີ້ ກໍ່ແມ່ນຢູ່ໃນວາລະຂອງການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ ແລະ ຂໍ່ານັບຮັບຕ້ອນວັນສຳຄັນຕ່າງໆຂອງຊາດ. ສະນັ້ນ, ເພື່ອເປັນການສ້າງເວທີໃນການແລກປ່ຽນທັດສະນະ ແລະ ເປັນຊ່ອງທາງໃນການຫັນເປັນວິຊາການຂອງພະນັກງານ ທຫລ ແລະ ທັງເປັນການຮອງຮັບຕໍ່ການຂະຫຍາຍຕົວໃນຕໍ່ໜ້າຂອງວຽກງານ ທີ່ນັບມື້ກ້າວເຂົ້າສູ່ລວງເລິກ ແລະ ສະຫຼັບຊັບຊ້ອນ ສົມທົບກັບສະພາບການພັດທະນາຂອງຂະແໜງການເງິນ-ການທະນາຄານໃນພາກພື້ນ ແລະ ສາກົນ ທີ່ມີການປ່ຽນແປງຢ່າງ

ໄວວາ ຈຶ່ງມີຄວາມຈຳເປັນໃນການຮຽນຮູ້ວຽກງານກ່ຽວຂ້ອງຢ່າງກວ້າງຂວາງ ທັງນີ້ກໍ່ເພື່ອຕອບສະໜອງ ແລະ ໝູນໃຊ້ເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າວຽກງານທີ່ຕິດພັນໃນແຕ່ລະໄລຍະ.

ການຈັດສຳມະນາທາງດ້ານວິຊາການໃນຄັ້ງນີ້ແມ່ນຈະໄດ້ແລກປ່ຽນໃນ 3 ຫົວຂໍ້ຄື: 1. ການເງິນແບບຍືນຍົງ; 2. ການຊຸກຍູ້ໃຫ້ສະກຸນເງິນຢວນກາຍເປັນສະກຸນເງິນສາກົນຂອງ ສປ ຈີນ ເຊິ່ງບັນຍາຍໂດຍໜ່ວຍຊາວໜຸ່ມກົມຮ່ວມມືສາກົນ ແລະ 3. ພາບລວມຂອງລະບົບຊຳລະຂອງ ສປປ ລາວ ແລະ ຍຸດທະສາດການພັດທະນາລະບົບຊຳລະຂອງຂະແໜງການທະນາຄານ-ການເງິນ ໄລຍະ 5 ປີ (2021-2025) ເຊິ່ງບັນຍາຍໂດຍໜ່ວຍຊາວໜຸ່ມກົມຄຸ້ມຄອງລະບົບຊຳລະສະສາງ.




(ຜູ້ບັນຍາຍຈາກໜ່ວຍຊາວໜຸ່ມກົມຮ່ວມມືສາກົນ ແລະ ໜ່ວຍຊາວໜຸ່ມກົມຄຸ້ມຄອງລະບົບຊຳລະສະສາງ)

ຜ່ານການນຳສະເໜີຂອງນັກສຳມະນາກອນ ໄດ້ຍົກໃຫ້ເຫັນຫຼາຍບັນຫາທີ່ມີຄວາມສຳຄັນ ແລະ ເປັນປະໂຫຍດ ເຊິ່ງເຮັດໃຫ້ສະມາຊິກຊາວໜຸ່ມ ທຫລ ໄດ້ມີຄວາມຮູ້ ຄວາມເຂົ້າໃຈ ສະພາບການ ແລະ ພາບລວມຂອງວຽກງານດັ່ງກ່າວຫຼາຍຂຶ້ນ. ພ້ອມນີ້ ກໍໄດ້ມີການແລກປ່ຽນຄວາມຄິດຄວາມເຫັນຢ່າງກົງໄປກົງມາ, ເປັນຂະບວນຟົດຟື້ນ ແລະ ສ້າງສັນ ແລະ ການສຳມະນາ ກໍໄດ້ປິດລົງໃນວັນດຽວກັນດ້ວຍຜົນສຳເລັດຕາມລະດັບຄາດໝາຍ.

#ຂ່າວໂດຍ: ນາງ ປາໄນ ພັນທະລາ

ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ